ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 769 -
ນະຄອນຫຼວງວຽງຈັນ, ວັນທີ: 15 MAR 2021

ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 1/2021

ກອງປະຊຸມສະພາບໍລິຫານຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຄັ້ງທີ 1/2021 ໄດ້ຈັດຂຶ້ນ ໃນວັນທີ 15 ມີນາ 2021 ເວລາ 10:00 ໂມງ, ທີ່ຊັ້ນ 3 ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ສີທອງ ພົມມະຈິດ ເຊິ່ງມີ ສະມາຊິກສະພາບໍລິຫານ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນເອກະພາບກັນ ດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ພິຈາລະນາ ແລະ ຮັບຮອງ;
2. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020 ເນື່ອງມາຈາກບໍລິສັດຂາດທຶນ ໃຫ້ນຳສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2020 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະ ຈຳປີ 2020 ພິຈາລະນາ ແລະ ຮັບຮອງ;
4. ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2021 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ພິຈາລະນາ ແລະ ຮັບຮອງ;
5. ກຳນົດເອົາວັນທີ 31 ມີນາ 2021 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020;
6. ກຳນົດເອົາວັນທີ 28 ເມສາ 2021 ເປັນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020. ໂດຍຈັດທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ;
7. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020, ມີລາຍລະອຽດດັ່ງນີ້:
   ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019;

1 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;

ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020;

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021;

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2021;

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ສີທອງ ພິມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com